FoodShare WISCONSIN

A Recipe for Good Health



# ບັດ WISCONSIN QUEST ຂອງທ່ານ

## YOUR WISCONSIN QUEST CARD

## ບັດ Wisconsin QUEST ແມ່ນຫຍັງ?

ບັດ Wisconsin QUEST ແມ່ນວິທີທີ່ປອດໄພແລະງ່າຍໃນການໃຊ້ຜົນປະໂຫຍດ FoodShare ຂອງທ່ານ ທ່ານຈະໃຊ້ບັດນີ້ຊື້ອາຫານຢູ່ຮ້ານທີ່ມີເຄື່ອງຮູດບັດແລະເຂົ້າຮ່ວມໂຄງການ FoodShare, ມັນກໍ່ຄືກັນກັບບັດເດບິດປະລາສຕິກແລະກໍ່ມີຊື່ຂອງທ່ານ, ເລກບັດ, ແລະຕາສັນຍາລັກຂອງ Wisconsin QUEST ຢູ່ເທິງບັດ.




ທ່ານຕ້ອງມີບັດ QUEST ຂອງທ່ານຢູ່ນຳທ່ານເພື່ອໃຊ້ຜົນປະໂຫຍດ FoodShare ຊື້ອາຫານ.

ຂ້າພະເຈົ້າຈະໃຊ້ບັດ QUEST ຢ່າງໃດ?

ທ່ານຈະໄດ້ຮັບຜົນປະໂຫຍດ FoodShare ຂອງທ່ານຜ່ານລະບົບການໂອນຜົນປະໂຫຍດທາງອີເລັກໂຕຣນິກ (Electronic Benefits Transfer ຫຼື EBT). ຫຼັງຈາກທີ່ຜົນປະໂຫຍດໄດ້ເຂົ້າໄປໃນບັດຂອງທ່ານແລ້ວ, ທ່ານສາມາດໃຊ້ບັດ QUEST ຂອງທ່ານຊື້ອາຫານຢູ່ຮ້ານຂາຍເຄື່ອງແຫ້ງແລະຕະຫຼາດຟາເມີ້ (farmers markets) ທີ່ຍອມຮັບບັດ QUEST ຢູ່ເຄື່ອງຮູດບັດຕອນຈ່າຍເງິນ ແລະທ່ານຕ້ອງໃສ່ໝາຍເລກລະຫັດປະຈຳຕົວ (PIN) ຂອງທ່ານ.

ໃນແຕ່ລະເດືອນ ທ່ານສາມາດໃຊ້ບັດ QUEST ໄດ້ຫຼາຍຄັ້ງເທົ່າທີ່ທ່ານຕ້ອງການ ເມື່ອທ່ານໃຊ້ບັດ QUEST ຂອງທ່ານ ຈະ:

- ບໍ່ມີຈຳນວນເງິນຂັ້ນຕ່ຳທີ່ທ່ານຕ້ອງຈ່າຍ.
- ບໍ່ມີຄ່າທຳນຽມໃນການຊື້ເຄື່ອງ.

ອາຫານທີ່ທ່ານສາມາດຊື້ໄດ້ ແມ່ນ:

- ເຂົ້າຈີ່ແລະຊີຣຽວ.
- ໝາກໄມ້ແລະຜັກ
- ຊີ້ນ, ປາ, ແລະເນື້ອສັດປີກ.
- ຜະລິດຕະພັນຈາກນົມ.
- ແກ່ນຜັກແລະຕົ້ນໄມ້ເພື່ອປູກຝັງໃຫ້ຄອບຄົວກິນ.

ທ່ານ**ບໍ່ສາມາດ**ໃຊ້ຜົນປະໂຫຍດຂອງທ່ານຊື້ສິ່ງເຫຼົ່ານີ້ໄດ້:

- ສິ່ງທີ່ບໍ່ແມ່ນອາຫານ (ອາຫານສັດລ້ຽງ ຜະລິດຕະພັນເຈ້ຍ, ສະບູ, ເຄື່ອງໃຊ້ໃນຄົວເຮືອນ, ເຄື່ອງແຕ່ງຕົວ, ຢາສີແຂ້ວ, ເຄື່ອງສໍາອາງ, ເປັນຕົ້ນ).
- ເບຍ, ວາຍ, ເຫຼົ້າ, ຢາສູບ.
- ອາຫານທີ່ຈະກິນໃນຮ້ານ.
- ອາຫານຮ້ອນ (ອາຫານທີ່ເຮັດແລ້ວແລະເສີບໃນຮ້ານ).
- ໄວຕາມິນແລະຢາ.

ເຈົ້າຍັງບໍ່ສາມາດໃຊ້ເງິນຊ່ວຍເຫຼືອຂອງທ່ານ ເພື່ອຊໍາລະຄ່າມັດຈໍາໃສ່ພາຊະນະຕ່າງໆ ເຊັ່ນ: ຂວດນົມແກ້ວ ແລະ ກະປ໋ອງນໍ້າອັດລົມ ຫຼື ຂວດນໍ້າອັດລົມທີ່ສົ່ງຄືນໄດ້ໃນ Wisconsin. ລັດອື່ນອາດມີກົດໝາຍກໍານົດໃຫ້ທ່ານຕ້ອງຈ່າຍຄ່າມັດຈໍາ. ໃນລັດເຫຼົ່ານັ້ນ, ຜົນປະໂຫຍດຂອງທ່ານສາມາດຖືກໃຊ້ເພື່ອຈ່າຍຄ່າທໍານຽມ.

## ໝາຍເລກລະຫັດປະຈໍາຕົວ (PIN) ແມ່ນຫຍັງ?

ເມື່ອທ່ານໄດ້ບັດ QUEST ຂອງທ່ານທາງຈົດໝາຍແລ້ວ ຈະມີຄໍາແນະນໍາໃຫ້ທ່ານເລືອກລະຫັດ PIN ທ່ານຕ້ອງມີລະຫັດ PIN ໃນການນໍາໃຊ້ຜົນປະໂຫຍດເມື່ອທ່ານໃຊ້ບັດ QUEST ຂອງທ່ານ. ເມື່ອທ່ານເລືອກລະຫັດ PIN ໃຫ້ເລືອກຕົວເລກສີ່ຕົວທີ່ຈື່ງ່າຍສໍາຫຼັບທ່ານແຕ່ບໍ່ໃຫ້ຄົນອື່ນຮູ້ນໍາໄດ້ງ່າຍໆ. ເກັບມ້ຽນລະຫັດ PIN ຂອງທ່ານໃຫ້ເປັນຄວາມລັບ. ຢ່າຂຽນລະຫັດ PIN ລົງໃນບັດຫຼືສິ່ງອື່ນທີ່ທ່ານເອົາບັດໃສ່ໄວ້ ແລະຢ່າເອົາລະຫັດ PIN ຂອງທ່ານໃສ່ໃນຖົງເງິນຫຼືກະເປົ໋າຂອງທ່ານ. ຖ້າທ່ານບອກລະຫັດ PIN ໃຫ້ຜູ້ອື່ນຮູ້ ແລະເອົາບັດ QUEST ໃຫ້ເຂົາເຈົ້າໄປ, ຄົນຜູ້ນັ້ນອາດຈະໃຊ້ຜົນປະໂຫຍດທັງໝົດຂອງທ່ານໄດ້ ຜົນປະໂຫຍດທີ່ຖືກໃຊ້ໄປນັ້ນຈະບໍ່ທົດແທນຄືນໃຫ້.

## ຖ້າຂ້າພະເຈົ້າລືມລະຫັດ PIN ຈະເກີດຫຍັງຂຶ້ນ?

ຖ້າທ່ານຈື່ບໍ່ໄດ້ວ່າລະຫັດ PIN ຂອງຕົນເອງແມ່ນຫຍັງ, ກະລຸນາໂທໄປ QUEST Card Customer Service ທີ່ 1-877-415-5164 ແລະເລືອກລະຫັດ PIN ໃໝ່, ທ່ານກໍ່ຄວນຈະເລືອກ PIN ໃໝ່ຖ້າທ່ານຄິດວ່າມີຜູ້ອື່ນຮູ້ລະຫັດ PIN ຂອງທ່ານ. ຖ້າທ່ານຢູ່ໃນຮ້ານຂາຍເຄື່ອງແຫ້ງແລະທ່ານໃສ່ລະຫັດ PIN ຜິດ, ທ່ານຈະມີໂອກາດໃສ່ລະຫັດ PIN ທີ່ຖືກຕ້ອງອີກສອງຄັ້ງ. ຖ້າທ່ານໃສ່ລະຫັດ PIN ຜິດສາມຄັ້ງ, ບັດຂອງທ່ານຈະຖືກລະງັບ ແລະທ່ານຈະບໍ່ສາມາດໃຊ້ບັດໄດ້ອີກຈົນກວ່າຈະເຖິງມື້ຕໍ່ໄປ.

## ຜົນປະໂຫຍດຈະຖືກໂອນໃສ່ບັດຂອງຂ້າພະເຈົ້າເມື່ອໃດ?

ໃນແຕ່ລະເດືອນທີ່ທ່ານເຂົ້າຮ່ວມໃນໂຄງການ FoodShare ຜົນປະໂຫຍດຂອງທ່ານຈະຖືກໂອນໃສ່ບັນຊີຂອງທ່ານໂດຍອັດຕະໂນມັດ. ວັນທີ່ທ່ານໄດ້ຜົນປະໂຫຍດຈະຂຶ້ນຢູ່ກັບເລກຕົວທີ່ແປດໃນເລກປະກັນສັງຄົມ(SSN) ຂອງທ່ານ.

| ຕົວເລກທີແປດຂອງ SSN ຂອງທ່ານ | ວັນທີທ່ານຈະນໍາໃຊ້ຜົນປະໂຫຍດຈາກບັດ QUEST ຂອງທ່ານໄດ້ |
|---|---|
| 0 | ວັນທີ່ 2 |
| 1 | ວັນທີ່ 3 |
| 2 | ວັນທີ່ 5 |
| 3 | ວັນທີ່ 6 |
| 4 | ວັນທີ່ 8 |
| 5 | ວັນທີ່ 9 |
| 6 | ວັນທີ່11 |
| 7 | ວັນທີ່ 12 |
| 8 | ວັນທີ່ 14 |
| 9 | ວັນທີ່15 |

ຜົນປະໂຫຍດຂອງທ່ານຈະເຂົ້າບັນຊີທ່ານຕາມວັນທີຂ້າງເທິງ ເຖິງແມ່ນວ່າວັນທີນັ້ນຈະກົງກັບວັນພັກກໍ່ຕາມ.

## ຂ້າພະເຈົ້າຈະກວດຍອດເງິນໄດ້ແນວໃດ?

ທ່ານສາມາດກວດຍອດເງິນຜົນປະໂຫຍດ FoodShare ຂອງທ່ານໄດ້ກ່ອນຈະຊື້ເຄື່ອງໂດຍວິທີທາງລຸ່ມນີ້:

- ໂທໄປ QUEST Card Customer Service ທີ່ 1-877-415-5164 (ສຽງ) ຫຼື 711 (TTY).
- ການກວດເບິ່ງໃບຮັບເງິນຈາກການຊື້ເຄື່ອງເທື່ອແລ້ວ.
- ໄປທີ່ www.ebtedge.com ຄລິກ Cardholder Login ແລະໃສ່ເລກບັດ QUEST ຂອງທ່ານ.

ທ່ານມີສິດທີ່ຈະໄດ້ໃບຮັບເງິນທຸກຄັ້ງທີ່ທ່ານຊື້ເຄື່ອງໂດຍໃຊ້ບັດ QUEST. ໃບຮັບເງິນຈະບອກຍອດເງິນຂອງທ່ານ. ຖ້າທ່ານບໍ່ໄດ້ໃບຮັບເງິນ, ທ່ານສາມາດຂໍໄດ້.

## ຂ້າພະເຈົ້າຈັ່ງຜົນປະໂຫຍດໄວ້ນຳໃຊ້ໃນເດືອນຕໍ່ໄປໄດ້ຫຼືບໍ່?

ແຕ່ລະເດືອນທ່ານສາມາດໃຊ້ບັດ QUEST ຂອງທ່ານໄດ້ຫຼາຍຄັ້ງເທົ່າທີ່ທ່ານຕ້ອງການແລະໃຊ້ຜົນປະໂຫຍດຂອງທ່ານໄດ້ຫຼາຍເທົ່າທີ່ທ່ານຕ້ອງການ. ທ່ານຈະຈັ່ງຜົນປະໂຫຍດຂອງທ່ານໄວ້ໃຊ້ໃນເດືອນຕໍ່ໄປເທົ່າໃດກໍ່ໄດ້, ແຕ່ຈື່ໄວ້ວ່າ, ຖ້າທ່ານບໍ່ໃຊ້ຜົນປະໂຫຍດຂອງທ່ານເປັນໄລຍະເວລາໜຶ່ງປີ ຜົນປະໂຫຍດທີ່ມີອາຍຸເກີນ 274 ວັນ ຈະຖືກຕັດອອກຈາກບັນຊີຂອງທ່ານ.

## ຜູ້ຊື້ທີ່ໄດ້ຮັບອະນຸຍາດແລະຜູ້ຈ່າຍແທນແມ່ນໃຜ?

ທ່ານສາມາດເລືອກຜູ້ຊື້ທີ່ໄດ້ຮັບອະນຸຍາດເພື່ອຊື້ເຄື່ອງສຳຫຼັບຄອບຄົວທ່ານ. ນອກຈາກບັດ QUEST ແລ້ວ, ຜູ້ຊື້ທີ່ໄດ້ຮັບອະນຸຍາດຂອງທ່ານຍັງໄດ້ຮັບບັດ QUEST ທີ່ມີຊື່ຂອງເຂົາເຈົ້າເອງ ແລະຈະສາມາດເຂົ້າເຖິງຜົນປະໂຫຍດແລະບັນຊີຂອງທ່ານໄດ້ນຳດ້ວຍ.

ທ່ານຍັງສາມາດເລືອກຜູ້ຈ່າຍແທນເພື່ອໃຊ້ຜົນປະໂຫຍດຈາກ FoodShare ແທນຕົວທ່ານໄດ້ນຳ. ຜູ້ຈ່າຍແທນຈະໄດ້ຮັບບັດ QUEST ທີ່ມີຊື່ຂອງເຂົາເຈົ້າເອງ. ຖ້າທ່ານເລືອກນຳໃຊ້ຜູ້ຈ່າຍແທນ, ທ່ານຈະບໍ່ໄດ້ບັດ QUEST ຂອງທ່ານເອງ.

ກະລຸນາຕິດຕໍ່ຕົວແທນຂອງທ່ານເພື່ອເລືອກຜູ້ຊື້ທີ່ໄດ້ຮັບອະນຸຍາດ ຫຼື ຜູ້ຈ່າຍແທນ. ທ່ານສາມາດຍົກເລີກການເຂົ້າເຖິງທີ່ທ່ານໄດ້ອະນຸຍາດໄປແລ້ວໄດ້ຕະຫຼອດເວລາ ໂດຍການໂທໄປ QUEST Card Customer Service ທີ່ 1-877-415-5164.

## ຖ້າບັດຂອງຂ້າພະເຈົ້ານຳໃຊ້ບໍ່ໄດ້ ຈະເຮັດແນວໃດ?

ຖ້າບັດຂອງທ່ານນຳໃຊ້ບໍ່ໄດ້, ກະລຸນາໂທໄປ QUEST Card Customer Service ທີ່ 1-877-415-5164 ຖ້າຫຼັງຈາກໂທແລ້ວທ່ານຍັງຕ້ອງການຄວາມຊ່ວຍເຫຼືອອີກ , ກະລຸນາໂທຫາຕົວແທນຂອງທ່ານ.

## ຖ້າຂ້າພະເຈົ້າໄດ້ຮັບຂໍ້ຄວາມ ເອີເຣີ (error) ໃນຂະນະນຳໃຊ້ບັດ QUEST ຂອງຂ້າພະເຈົ້າຢູ່ຮ້ານຂາຍເຄື່ອງ ຂ້າພະເຈົ້າຈະເຮັດແນວໃດ?

ຖ້າທ່ານໄດ້ຮັບຂໍ້ຄວາມ ເອີເຣີ (error) ໃນຂະນະນຳໃຊ້ບັດ QUEST ກະລຸນາ, ໂທໄປ QUEST Card Customer Service ທີ່ 1-877-415-5164. ນີ້ແມ່ນຕົວຢ່າງຂໍ້ຄວາມ ເອີເຣີ (error) ບາງສ່ວນ ແລະວິທີແກ້ໄຂບັນຫາ:

- **Card not on file. (ບັດບໍ່ໄດ້ຢູ່ໃນບັນຊີ)** ກະລຸນາຕິດຕໍ່ QUEST Card Customer Service ທີ່ 1-877-415-5164.
- **Invalid PIN. (ລະຫັດ PIN ບໍ່ຖືກຕ້ອງ)** ທ່ານໃສ່ລະຫັດ PIN ບໍ່ຖືກຕ້ອງ. ຖ້າທ່ານໃສ່ລະຫັດ PIN ຜິດສາມຄັ້ງພາຍໃນວັນດຽວກັນ, ບັດຂອງທ່ານຈະຖືກລະງັບຈົນເຖິງວັນຕໍ່ໄປ.
- **Insufficient balance. (ຍອດເງິນບໍ່ພຽງພໍ)** ທ່ານໄດ້ນຳໃຊ້ຜົນປະໂຫຍດຫຼາຍກ່ອນທີ່ທ່ານມີໃນບັນຊີທ່ານ. ເອົາເຄື່ອງແຫ້ງຄືນໃຫ້ຮ້ານ ຫຼື ຈ່າຍສ່ວນທີ່ເຫຼືອດ້ວຍເງິນຂອງທ່ານເອງ.
- **Inactive card. (ບັດບໍ່ແອັກທີຟ)** ທ່ານບໍ່ໄດ້ເລືອກລະຫັດ PIN. ກະລຸນາໂທໄປ QUEST

Card Customer Service ທີ່ 1-877-415-5164 ເພື່ອເລືອກລະຫັດ PIN.

## ຂ້າພະເຈົ້າຈະເຮັດແນວໃດຖ້າຫາບັດບໍ່ພໍ້?

ທັນທີທີ່ທ່ານຮູ້ຕົວວ່າໄດ້ເຮັດບັດ QUEST ເສຍ ຫຼືວ່າບັດຖືກລັກໄປ ກະລຸນາໂທໄປ QUEST Card Customer Service ທີ່ 1-877-415-5164. ເມື່ອທ່ານໂທໄປ, ບັດຂອງທ່ານຈະຖືກຍົກເລີກ. ຖ້າມີຄົນເອົາບັດຂອງທ່ານໄປນໍາໃຊ້ກ່ອນທີ່ທ່ານຈະໂທໄປຍົກເລີກ, ຜົນປະໂຫຍດຂອງທ່ານຈະບໍ່ໄດ້ທົດແທນຄືນ. ເມື່ອທ່ານແຈ້ງວ່າບັດເສຍຫຼືຖືກລັກ, ຈະບໍ່ມີໃຜສາມາດນໍາໃຊ້ໄດ້ອີກ. ບັດໃໝ່ຂອງທ່ານຈະຖືກສົ່ງໃຫ້ທ່ານພາຍໃນວັນຕໍ່ມາ.

ຖ້າບັດ QUEST ໃນບັນຊີຂອງທ່ານເສຍຫຼືຖືກລັກ, ທ່ານອາດຕ້ອງຈ່າຍຄ່າທໍານຽມ 2.70 ໂດລາ ສໍາຫຼັບບັດໃໝ່. ຄ່າທໍານຽມຈະຫັກຈາກຜົນປະໂຫຍດ FoodShare ຂອງທ່ານ. ຖ້າບັນຊີຂອງທ່ານມີເງິນບໍ່ພໍ, ຄ່າທໍານຽມກໍ່ຈະຫັກເອົາທັນທີທີ່ມີເງິນໃນບັນຊີພຽງພໍ. ຜູ້ຖືບັດມີສິດໄດ້ຮັບບັດ QUEST ໃໝ່ທົດແທນໂດຍບໍ່ຕ້ອງຈ່າຍເງິນໜຶ່ງຄັ້ງໃນແຕ່ລະປີ ຈາກວັນທີ່ 1 ເດືອນມັງກອນ ຫາ ວັນທີ່ 31 ເດືອນທັນວາ.

## ຂ້າພະເຈົ້າຈະເຮັດແນວໃດຖ້າບັດຂອງຂ້າພະເຈົ້າເສຍຫາຍ?

ຖ້າບັດຂອງທ່ານເສຍຫາຍ ຫຼື ຮ້ານຂາຍເຄື່ອງຕ້ອງກົດໃສ່ເລກບັດທ່ານດ້ວຍມືໃນແຕ່ລະຄັ້ງທີ່ທ່ານນໍາໃຊ້ບັດ, ກະລຸນາໂທໄປ QUEST Card Customer Service ທີ່ 1-877-415-5164 ແລະຂໍບັດໃໝ່ທົດແທນ.

## ຂ້າພະເຈົ້າຈະຂໍບັດໃໝ່ໄດ້ຈັກອັນ?

ລັດວິສຄົນຊິນຕ້ອງເຝົ້າເບິ່ງຈໍານວນບັດ QUEST ທົດແທນ ທີ່ FoodShare ແຕ່ລະກຸ່ມເຮັດອອກ. ຖ້າທ່ານໄດ້ຮັບບັດຫ້າໃບໃນໄລຍະ 12 ເດືອນ, ຫ້ອງການກວດກາທົ່ວໄປ (Office of the Inspector General) ອາດກວດສອບບັດ QUEST ຂອງທ່ານເພື່ອສືບຫາວ່າມີການນໍາໃຊ້ຜົນປະໂຫຍດ FoodShare ໄປໃນທາງຜິດຫຼືບໍ່

## ຂ້າພະເຈົ້າຈະດູແລບັດ QUEST ຂອງຂ້າພະເຈົ້າໄດ້ແນວໃດ?

ລາຍການທາງລຸ່ມນີ້ແມ່ນວິທີການດູແລບັດ QUEST ວິທີເຫຼົ່ານີ້ອາດຊ່ວຍປົກປ້ອງບັດ QUEST ຂອງທ່ານໄດ້ແລະອາດຊ່ວຍໃຫ້ບໍ່ຕ້ອງຂໍບັດໃໝ່ໃນອະນາຄົດ:

- ມ້ຽນບັດ QUEST ຂອງທ່ານໃນທີ່ປອດໄພ.
- ຮັກສາບັດ QUEST ຂອງທ່ານໃຫ້ສະອາດ.
- ດູແລບັດ QUEST ຂອງທ່ານໃຫ້ຄືກັບບັດເຄດິດ.
- ຢ່າພັບຫຼືບິດບັດ QUEST.
- ຢ່າໃຊ້ບັດ QUEST ຂອງທ່ານໃນການຂູດກະຈົກໜ້າລົດ, ໄຂກະແຈປະຕູ, ເປັນຕົ້ນ
- ດູແລຢ່າໃຫ້ມີຮອຍຂູດຂີດທີ່ແຖບແມ່ເຫຼັກ, ແລະໃຫ້ແຖບແມ່ເຫຼັກສະອາດສະເໝີ.
- ເກັບມ້ຽນບັດ QUEST ຂອງທ່ານໃນຖົງເງິນຫຼືກະເປົ໋າ.
- ເກັບມ້ຽນບັດ QUEST ຂອງທ່ານໃຫ້ຫ່າງໄກຈາກແມ່ເຫຼັກ ເຊັ່ນ ຂໍກະເປົ໋າເງິນຫຼືກະເປົ໋າຖື, ແລະໂທລະພາບ.
- ປະຕິບັດຕາມຄໍາແນະນໍາຂອງພະນັກງານເກັບເງິນໃນຮ້ານຂາຍເຄື່ອງໃນຂະນະທີ່ທ່ານໃຊ້ບັດ.
- ຢ່າບອກລະຫັດ PIN ຂອງທ່ານໃຫ້ພະນັກງານເກັບເງິນໃນຮ້ານຂາຍເຄື່ອງຮູ້.
- ຢ່າເອົາບັດ QUEST ຂອງທ່ານຖິ້ມ. ບັດ QUEST ຂອງທ່ານບໍ່ມີວັນໝົດອາຍຸ, ທ່ານສາມາດນໍາໃຊ້ບັດ QUEST ຂອງທ່ານໄດ້ຕະຫຼອດທີ່ທ່ານໄດ້ຮັບຜົນປະໂຫຍດ FoodShare.
- ຢ່າເອົາບັດ QUEST ຖິ້ມ ຖ້າທ່ານຢຸດຮັບຜົນປະໂຫຍດຈາກ FoodShare, ຖ້າທ່ານໄດ້ຮັບຜົນປະໂຫຍດ FoodShare ອີກຄັ້ງ, ບັດ QUEST ອັນເກົ່າຂອງທ່ານຍັງສາມາດນໍາໃຊ້ໄດ້ຕໍ່ໄປ.

## ຂ້າພະເຈົ້າຈະຄືນເຄື່ອງທີ່ຊື້ກັບບັດ QUEST ໄດ້ແນວໃດ?

ຖ້າທ່ານຈະຄືນເຄື່ອງ, ກະລຸນາເອົາເຄື່ອງ, ໃບຮັບເງິນ, ແລະບັດ QUEST ຂອງທ່ານໄປທີ່ຮ້ານທີ່ທ່ານຊື້ເຄື່ອງມາ, ຮ້ານຈະເອົາເງິນຄືນເຂົ້າບັນຊີຂອງທ່ານ.ທ່ານຈະສາມາດໃຊ້ຜົນປະໂຫຍດທີ່ໄດ້ຄືນມານັ້ນທັນທີ.
ທ່ານຈະບໍ່ໄດ້ຄືນເປັນເງິນສົດ.

## ຂ້າພະເຈົ້າຈະແກ້ໄຂ ເອີເຣີ (error) ໃນບັນຊີຂອງຂ້າພະເຈົ້າແນວໃດ?

ກະລະນາໂທໄປ QUEST Card Customer Service ທີ່ 1-800-415-5164 ເພື່ອແຈ້ງວ່າບັດເອີເຣີ.
ທ່ານຈະໄດ້ຮັບຈົດໝາຍທີ່ມີການຕັດສິນກ່ຽວກັບເອີເຣີນັ້ນ.
ຖ້າທ່ານບໍ່ເຫັນພ້ອມນຳກັບຄຳຕັດສິນນັ້ນ,
ທ່ານສາມາດຍື່ນຄຳຮ້ອງຂໍຮັບການພິຈາລະນາທີ່ເປັນທຳ.
ຂໍ້ມູນກ່ຽວກັບການຍື່ນຄຳຮ້ອງຈະຢູ່ໃນຈົດໝາຍທີ່ທ່ານໄດ້ຮັບ.

**ໝາຍເຫດ:**
ຮ້ານຂາຍເຄື່ອງຕ້ອງເພີ່ມຫຼືຫຼຸດຈຳນວນການຊື້ກັບບັດ QUEST ຂອງທ່ານລົງເພື່ອແກ້ໄຂເອີເຣີ (ຕົວຢ່າງເຊັ່ນ ເອີເຣີຂອງລະບົບ).
ທ່ານຈະໄດ້ຮັບຈົດໝາຍວ່າມີເຫດຈຳເປັນແນວໃດໃນການປ່ຽນແປງນັ້ນ. ທ່ານມີເວລາ 15 ວັນເຮັດວຽກໄວ່ຈາກວັນທີ່ໃນຈົດໝາຍຄຳຮ້ອງຂໍໃຫ້ມີການພິຈາລະນາ.
ຈຳນວນເງິນທີ່ປ່ຽນແປງນັ້ນຈະຢູ່ໃນບັນຊີທ່ານຈົນກວ່າຈະໄດ້ມີຄຳຕັດສິນຈາກການພິຈາລະນາ.

## ຖ້າຂ້າພະເຈົ້າຍ້າຍທີ່ຢູ່, ຂ້າພະເຈົ້າຈະຕ້ອງເຮັດສິ່ງໃດຫຼືບໍ່?

ຖ້າທ່ານວາງແຜນທີ່ຈະຍ້າຍທີ່ຢູ່,
ກະລຸນາຕິດຕໍ່ຕົວແທນຂອງທ່ານເພື່ອແຈ້ງທີ່ຢູ່ໃໝ່ຂອງທ່ານ.
ຖ້າບັດຂອງທ່ານໄດ້ຖືກສົ່ງໄປທີ່ຢູ່ເກົ່າຂອງທ່ານ,
ມັນຈະບໍ່ຖືກສົ່ງຕໍ່ໄປທີ່ຢູ່ໃໝ່ຂອງທ່ານ.

## ຂ້າພະເຈົ້າຕ້ອງເຮັດສິ່ງໃດຖ້າຂ້າພະເຈົ້າຍ້າຍອອກຂາກລັດ?

ທ່ານຕ້ອງໄດ້ແຈ້ງໃຫ້ຕົວແທນຂອງທ່ານຮູ້,
ຖ້າທ່ານຍ້າຍອອກຈາກລັດ.
ທ່ານຄວນຈະຍັງໄດ້ຮັບຜົນປະໂຫຍດຈາກບັດ QUEST ຂອງລັດວິສຄົນຊິນຕໍ່ໃນລັດໃໝ່ຂອງທ່ານ.
ຖ້າທ່ານບໍ່ສາມາດຫາຮ້ານຂາຍເຄື່ອງທີ່ຮັບບັດ QUEST ຂອງວິສຄົນຊິນ,
ກະລຸນາຕິດຕໍ່ຕົວແທນໃນລັດວິສຄົນຊິນທີ່ເຮັດອອກຜົນປະໂຫຍດ FoodShare ໃຫ້ທ່ານ.
ທ່ານຕ້ອງສະໝັກຂໍຮັບຜົນປະໂຫຍດໃນລັດໃໝ່ຂອງທານເພື່ອຮັບຜົນປະໂຫຍດຕໍ່.

## ຂ້າພະເຈົ້າຈະຫາຂໍ້ມູນເພີ່ມເຕີມໄດ້ຈາກທີ່ໃດ?

- ຕິດຕໍ່ QUEST Card Customer Service ທີ່ 1-877-415-5164 (ສຽງ) ຫຼື 711 (TTY).
- ໄປທີ່ dhs.wisconsin.gov/foodshare/index.htm.

ຂໍ້ມູນທີ່ມີໃຫ້ແມ່ນຂໍ້ມູນທົ່ວໄປ.
ຖ້າທ່ານຕ້ອງການຂໍ້ມູນເພີ່ມເຕີມກ່ຽວກັບ FoodShare, ກະລຸນາຕິດຕໍ່ຕົວແທນຂອງທ່ານ.

## ຄຳປະກາດຄວາມເປັນກາງຂອງ

ຕາມກົດໝາຍສິດທິພົນລະເມືອງຂອງລັດຖະບານກາງ ແລະ ການຄວບຄຸມແລະນະໂຍບາຍສິດທິພົນລະເມືອງກະຊວງກະສິກຳສະຫະລັດອາເມລິກາ (USDA), USDA, ລວມເຖິງ ຕົວແທນ, ຫ້ອງການ, ແລະລູກຈ້າງຂອງ USDA, ແລະສະຖາບັນທີ່ເຂົ້າຮ່ວມ, ຫຼື ບໍລິຫານໂຄງການຂອງ USDA, ຖືກສັ່ງຫ້າມການເລືອກປະຕິບັດທີ່ມີເຫດມາຈາກ ເຊື້ອຊາດ, ສີຜິວ, ປະເທດຕົ້ນກຳເນີດ, ເພດ, ຄວາມເຊື່ອດ້ານສາດສະນາ, ຄວາມພິການ, ອາຍຸ, ຄວາມເຊື່ອດ້ານການເມືອງ, ຫຼື ການແກ້ແຄ້ນຈາກການເຮັດກິດກະກຳດ້ານສິດທິພົນລະເມືອງກ່ອນໜ້າໃນໂຄງການຫຼືກິດຈະກຳທີ່ USDA ຈັດຂຶ້ນ.

ພິການທີ່ຕ້ອງການວິທີສື່ສານທາງເລືອກເພື່ອເບິ່ງຂໍ້ມູນຂອງໂຄງການ (ຕົວຢ່າງເຊັ່ນ ອັກສອນເບຣລ, ຕົວຫຼັງສືຂະໜາດໃຫຍ່, ເທັບສຽງ, ຫຼື ພາສາມືອາເມລິກາ ເປັນຕົ້ນ), ສາມາດຕິດຕໍ່ຕົວແທນ (ຂອງລັດ ຫຼື ຂອງທ້ອງຖິ່ນ) ທີ່ພວກເຂົາສະໝັກຂໍຮັບປະໂຫຍດ.

ຜູ້ທີ່ຫູໜວກ, ມີບັນຫາການໄດ້ຍິນ, ຫຼືບັນຫາການປາກເວົ້າ ສາມາດຕິດຕໍ່ USDA ໄດ້ທີ່ Federal Relay Service (ບໍລິການຣີເລຂອງລັດຖະບານກາງ) ໄດ້ທີ່ (800) 877-8339 ນອກຈາກນີ້ ຍັງມີຂໍ້ມູນໂຄງການເປັນພາສາອື່ນນອກຈາກພາສາອັງກິດນຳດ້ວຍ.

ຖ້າທ່ານຕ້ອງການສົ່ງຄຳຮ້ອງຮຽນກ່ຽວກັບການເລືອກປະຕິບັດ, ກະລຸນາເຕີມຂໍ້ມູນໃນແບບຟອມ [USDA Program Discrimination Complaint Form](https://www.ascr.usda.gov/how-file-program-discrimination-complaint) (AD-3027) ທີ່ສາມາດຫາໄດ້ທີ່ [https://www.ascr.usda.gov/how-file-program-discrimination-complaint](https://www.ascr.usda.gov/how-file-program-discrimination-complaint) ແລະທີ່ຫ້ອງການ USDA ທຸກແຫ່ງ, ຫຼືຂຽນຈົດໝາຍສົ່ງໄປທີ່ USDA ແລະໃສ່ຂໍ້ມູນທີ່ຕ້ອງເຕີມໃນແບບຟອມມານຳດ້ວຍ. ຖ້າທ່ານຕ້ອງການຂໍແບບຟອມການຮ້ອງຮຽນ, ຖະລຸນາໂທໄປທີ່ (866) 632-9992. ສົ່ງແບບຟອມທີ່ເຕີມຂໍ້ມູນແລ້ວໄປຫາ USDA ທີ່

(1) ຈົດໝາຍ: : U.S. Department of Agriculture
Office of the Assistant Secretary for Civil Rights
1400 Independence Avenue, SW
Washington, D.C. 20250-9410;

(2) ແຟັກ: : (202) 690-7442; ຫຼື

(3) ອີເມລ: program.intake@usda.gov

ສະຖາບັນນີ້ແມ່ນໃຫ້ບໍລິການທີ່ເທົ່າທຽມກັນທຸກຄົນ.